ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 280 /ລບ
ນະຄອນຫຼວງວຽງຈັນ, ວັນທີ 09.08.2022

# ດຳລັດ
# ວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນແພ່ງ ສະບັບເລກທີ 13/ສພຊ, ລົງວັນທີ 4 ກໍລະກົດ 2012;
- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2012;
- ອີງຕາມ ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງກະຊວງຍຸຕິທຳ ສະບັບເລກທີ 892/ກຍ, ລົງວັນທີ 11 ກໍລະກົດ 2022.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ລວມທັງຊັບສິນທີ່ສານຕັດສິນໃຫ້ລັດຄຸ້ມຄອງ ເພື່ອປົກປັກຮັກສາ, ຂຶ້ນບັນຊີ, ຂຶ້ນທະບຽນ, ຄຸ້ມຄອງ, ນຳໃຊ້ ແລະ ຂາຍ ຊັບສິນດັ່ງກ່າວ ຕາມກົດໝາຍ ແນໃສ່ປົກປ້ອງສິດ, ຜົນປະໂຫຍດຂອງລັດ, ສິດຜົນປະໂຫຍດອັນຊອບທຳຂອງບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມຂອງຊາດ.

**ມາດຕາ 2 ຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ**

ຊັບສິນທີ່ຖືກຍຶດ ຫຼື ອາຍັດ ແມ່ນ ຊັບສິນທີ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໄດ້ອອກຄຳສັ່ງຍຶດ ຫຼື ອາຍັດຊັບສິນດັ່ງກ່າວໄວ້.

ຊັບສິນທີ່ຮິບເປັນຂອງລັດ ແມ່ນ ຊັບສິນທີ່ສານປະຊາຊົນ ໄດ້ຕັດສິນຮິບຊັບສິນດັ່ງກ່າວ ມາເປັນຂອງລັດ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ຊັບສິນເສື່ອມຄຸນນະພາບໄວ** ໝາຍເຖິງ ຊັບສິນ ທີ່ຈະເນົ່າ, ເປື່ອຍໄວ ຫຼື ໃກ້ຈະໝົດອາຍຸການນໍາໃຊ້ ຊຶ່ງຈະເຮັດໃຫ້ເສຍຫາຍ, ສົ່ງຜົນກະທົບໂດຍກົງ ຕໍ່ມູນຄ່າ, ຊີວິດ, ສຸຂະພາບຂອງຜູ້ຊົມໃຊ້ ຫຼື ສິ່ງແວດລ້ອມ ເປັນຕົ້ນ ເຄື່ອງອຸປະໂພກ, ເຄື່ອງບໍລິໂພກ, ຊີ້ນ, ຜັກ;

2. **ຊັບສິນທີ່ຫຍຸ້ງຍາກໃນການປົກປັກຮັກສາ** ໝາຍເຖິງ ຊັບສິນ ທີ່ຕ້ອງການໃຫ້ມີຄົນດູແລ, ປົກປັກຮັກສາ ຫຼື ຕ້ອງການສະຖານທີ່ເກັບຮັກສາ ທີ່ເໝາະສົມ ເປັນຕົ້ນ ສັດລ້ຽງ, ຕົ້ນໄມ້ມີມູນຄ່າສູງ, ຍານພາຫະນະ, ວັດຖຸບູຮານ;

3. **ຊັບສິນທີ່ສານຕັດສິນໃຫ້ລັດຄຸ້ມຄອງ** ໝາຍເຖິງ ຊັບສິນທີ່ບໍ່ມີເຈົ້າຂອງ ຫຼື ຊັບສິນທີ່ມີຂໍ້ຂັດແຍ່ງ ຊຶ່ງສານປະຊາຊົນ ໄດ້ຕັດສິນໃຫ້ລັດຄຸ້ມຄອງ ເປັນຕົ້ນ ວັດຖຸບູຮານ, ທີ່ດິນ, ສິ່ງປຸກສ້າງ;

4. **ການປະມູນຂາຍຊັບສິນ** ໝາຍເຖິງ ການແຂ່ງຂັນທາງດ້ານລາຄາ ແລະ ຄຸນນະພາບ ກ່ຽວກັບຊັບສິນທີ່ນໍາມາປະມູນຂາຍ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

5. **ການຍຶດຊັບ** ໝາຍເຖິງ ການເອົາຊັບສິນເຄື່ອນທີ່ ທີ່ໄດ້ນໍາໃຊ້ເຂົ້າໃນການກະທໍາຜິດ, ໄດ້ມາຈາກການກະທໍາຜິດ, ພົວພັນກັບການກະທໍາຜິດ ຫຼື ມີຂໍ້ຂັດແຍ່ງກັນ ມາໄວ້ ຕາມຄໍາສັ່ງຂອງອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

6. **ການອາຍັດຊັບ** ໝາຍເຖິງ ການບໍ່ອະນຸຍາດໃຫ້ ຊື້ ຂາຍ, ມອບ, ໂອນ, ແລກປ່ຽນ, ຈໍານໍາ, ຈໍານອງ , ຄໍ້າປະກັນ, ຕໍ່ເຕີມ, ທໍາລາຍ ຫຼື ປ່ຽນແປງ ແລະ ອື່ນໆ ກ່ຽວກັບຊັບສິນເຄື່ອນທີ່ ຫຼື ຊັບສິນຄົງທີ່ ທີ່ພົວພັນກັບການກະທໍາຜິດ ຫຼື ມີຂໍ້ຂັດແຍ່ງກັນ ລວມທັງບັນຊີເງິນຝາກຢູ່ທະນາຄານ ຕາມຄໍາສັ່ງຂອງອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

7. **ການຮິບເປັນຂອງລັດ** ໝາຍເຖິງ ການເອົາຊັບສິນ ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ມາເປັນຂອງລັດຕາມຄໍາຕັດສິນຂອງສານ;

8. **ການຂຶ້ນທະບຽນ** ໝາຍເຖິງ ການບັນທຶກຂໍ້ມູນ ກ່ຽວກັບຊັບສິນທີ່ສານຕັດສິນຮິບເປັນຂອງລັດດ້ວຍການຕິດກາໝາຍ, ການໃສ່ເລກທະບຽນ, ການໃສ່ເລກລະຫັດ ເຂົ້າໃນລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ໃນການຄຸ້ມຄອງ ແລະ ຕິດຕາມ ກວດກາ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ**

ລັດ ເອົາໃຈໃສ່ ໃນວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ດ້ວຍການກໍານົດນະໂຍບາຍ, ລະບຽບການ ແລະ ກົນໄກ ໃນການເຕົ້າໂຮມ, ຄຸ້ມຄອງ ແລະ ນໍາໃຊ້ຊັບສິນດັ່ງກ່າວ ບໍ່ໃຫ້ຕົກເຮ່ຍ, ເສຍຫາຍ, ມີຄວາມຍຸຕິທໍາ ແລະ ໂປ່ງໃສ ພ້ອມທັງປະກອບບຸກຄະລາກອນ, ສະໜອງງົບປະມານ ແລະ ວັດຖຸປະກອນທີ່ຈໍາເປັນ ແລະ ສ້າງເງື່ອນໄຂ ໃນການເຄື່ອນໄຫວວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ**

ການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມີການຈັດການແບ່ງຂັ້ນຄຸ້ມຄອງ ແລະ ຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງ;

2. ຮັບປະກັນປົກປັກຮັກສາຊັບສິນ ບໍ່ໃຫ້ຕົກເຮ່ຍ, ເສຍຫາຍ ຫຼື ເປ່ເພ;

3. ນໍາໃຊ້ໃຫ້ຖືກຕາມລະບຽບການ;

4. ຍຸຕິທຳ, ໂປ່ງໃສ ແລະ ກວດສອບໄດ້;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ນຳໃຊ້ຊັບສິນ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ອົງການສືບສວນ-ສອບສວນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ລວມທັງ ຊັບສິນທີ່ສານຕັດສິນໃຫ້ລັດຄຸ້ມຄອງ.

## ໝວດທີ 2
## ອົງການດຳເນີນຄະດີ

**ມາດຕາ 7 ອົງການດຳເນີນຄະດີ**

ອົງການດຳເນີນຄະດີ ປະກອບດ້ວຍ:

1. ອົງການສືບສວນ-ສອບສວນ;
2. ອົງການໄອຍະການປະຊາຊົນ;
3. ສານປະຊາຊົນ.

**ມາດຕາ 8 ອົງການສືບສວນ-ສອບສວນ**

ອົງການສືບສວນ-ສອບສວນ ມີ ດັ່ງນີ້:

1. ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ;
2. ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ;
3. ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ພາສີ, ອາກອນ, ຊັບສິນ;
4. ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້;
5. ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ;
6. ອົງການສືບສວນ-ສອບສວນຂອງພາກສ່ວນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 9 ສິດ ແລະ ໜ້າທີ່ຂອງອົງການສືບສວນ-ສອບສວນ**

ອົງການສືບສວນ-ສອບສວນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ປົກປັກຮັກສາ ຊັບສິນທີ່ຖືກຍຶດ ຫຼື ອາຍັດ ບໍ່ໃຫ້ຕົກເຮ່ຍ, ເສຍຫາຍ ຫຼື ເປ່ເພ;

2. ກວດກາ, ນັບຈຳນວນ ແລະ ບັນທຶກ ຊັບສິນທີ່ຖືກຍຶດ ຫຼື ອາຍັດ;

3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳເອົາຕົວຢ່າງ ໄປພິສູດ ແລະ ຢັ້ງຢືນ ກ່ຽວກັບປະເພດ, ຈຳນວນ, ຂະໜາດ ແລະ ຄຸນລັກສະນະຂອງຊັບສິນທີ່ຖືກຍຶດ;

4. ສັງລວມລາຍການຊັບສິນທີ່ຖືກຍຶດ ຫຼື ອາຍັດ ເພື່ອລາຍງານໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ໃນເວລາສະຫຼຸບສຳນວນຄະດີ;

5. ມອບຮັບຊັບສິນທີ່ຖືກຍຶດ ຫຼື ອາຍັດ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຕາມກົດໝາຍ ຫຼື ຕາມຄຳຕັດສິນຂອງສານ;

6. ອອກຄຳສັ່ງຂາຍຊັບສິນເສື່ອມຄຸນນະພາບໄວ ເພື່ອເກັບຮັກສາເງິນໄວ້;

7. ຂາຍຊັບສິນທີ່ຫຍຸ້ງຍາກໃນການປົກປັກຮັກສາ ຕາມຄຳສັ່ງຂອງອົງການໄອຍະການ ເພື່ອເກັບຮັກສາເງິນໄວ້;

8. ສະເໜີໃຫ້ອົງການໄອຍະການປະຊາຊົນ ເພື່ອຖະແຫຼງຕໍ່ສານປະຊາຊົນ ພິຈາລະນາຕັດສິນຮິບຊັບສິນທີ່ໄດ້ມາຈາກການກະທຳຜິດ ທີ່ບໍ່ຮູ້ ຫຼື ບໍ່ອາດຮູ້ໄດ້ວ່າ ຜູ້ໃດເປັນເຈົ້າຂອງ ຫຼື ຜູ້ກະທຳຜິດ ມາເປັນຂອງລັດ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 10 ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ**

ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ປະກອບດ້ວຍ:

1. ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ສູງສຸດ;
2. ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ພາກ;
3. ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ແຂວງ, ນະຄອນຫຼວງ;
4. ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ເຂດ;
5. ອົງການໄອຍະການ ແລະ ສານ ທະຫານ.

ສິດ ແລະ ໜ້າທີ່ຂອງອົງການໄອຍະການຊາຊົນ, ສານປະຊາຊົນ, ອົງການໄອຍະການທະຫານ ແລະ ສານທະຫານ ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຕ່າງຫາກ.

ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ປະສານງານ ແລະ ສ້າງກົນໄກການຮ່ວມມືກັບອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການໄອຍະການທະຫານ ແລະ ສານທະຫານ ເພື່ອເກັບກຳ, ສັງລວມຂໍ້ມູນ ກ່ຽວກັບຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ.

## ໝວດທີ 3
## ຊັບສິນທີ່ຖືກຍຶດ ຫຼື ອາຍັດ

**ມາດຕາ 11 ການຍຶດ ຫຼື ອາຍັດຊັບສິນ**

ໃນກໍລະນີເຈົ້າໜ້າທີ່ ຫຼື ການຈັດຕັ້ງ ຫາກພົບເຫັນການກະທຳຜິດ ເຊິ່ງໜ້າ ແລະ ຮີບດ່ວນ ໂດຍໄດ້ກວດພົບຊັບສິນທີ່ສົງໄສວ່າ ໄດ້ນຳໃຊ້ເຂົ້າໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດ ໃຫ້ເຈົ້າໜ້າທີ່ ຫຼື ການຈັດຕັ້ງດັ່ງກ່າວ ຍຶດຊັບສິນນັ້ນໄວ້ ໂດຍມີການກວດກາ, ກວດນັບລະອຽດ ແລະ ເຮັດບົດບັນທຶກການຍຶດຊັບສິນ ແລ້ວມອບຊັບສິນ ແລະ ບົດບັນທຶກດັ່ງກ່າວ ໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ດຳເນີນຄະດີ.

ໃນກໍລະນີພົບເຫັນຊັບສິນທີ່ຕິດພັນກັບການກະທຳຜິດ ແຕ່ບໍ່ເຫັນຜູ້ກະທຳຜິດ ຫຼື ຜູ້ກະທຳຜິດເອົາຕົວຫຼົບໜີ ໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນທີ່ກ່ຽວຂ້ອງ ຍຶດຊັບສິນດັ່ງກ່າວ ເພື່ອດຳເນີນຄະດີ ຕາມກົດໝາຍ.

ໃນການດຳເນີນການສືບສວນ-ສອບສວນ ຖ້າຫາກໄດ້ຮູ້ແຈ້ງ ກ່ຽວກັບປະເພດ, ຈຳນວນ, ຂະໜາດ ແລະ ສະຖານທີ່ເກັບມ້ຽນຊັບສິນ ທີ່ນຳໃຊ້ເຂົ້າໃນການກະທຳຜິດ, ໄດ້ມາຈາກການກະທຳຜິດ ຫຼື ພົວພັນກັບການກະທຳຜິດ ແລະ ຈະນຳໃຊ້ເປັນປະໂຫຍດໃນການດຳເນີນຄະດີ ຫົວໜ້າອົງການສືບສວນ-ສອບສວນ ຕ້ອງອອກຄຳສັ່ງຍຶດ ຫຼື ອາຍັດຊັບສິນນັ້ນ.

ຖ້າຫາກຊັບສິນທີ່ຖືກຍຶດນັ້ນ ເປັນວັດຖຸຄ້າຍຄື ຄຳ, ເງິນ, ເພັດ ຫຼື ວັດຖຸມີຄ່າອື່ນ ຕ້ອງກວດກາ, ນັບຈຳນວນ, ຊັ່ງນ້ຳໜັກ ແລ້ວນຳເອົາຕົວຢ່າງໄປພິສູດ ແລະ ຢັ້ງຢືນ ກ່ຽວກັບຄຸນລັກສະນະຂອງຊັບສິນດັ່ງກ່າວ ນຳການຈັດຕັ້ງລັດທີ່ກ່ຽວຂ້ອງ ຫຼື ພາກສ່ວນເອກະຊົນ ທີ່ໜ້າເຊື່ອຖື ຢ່າງທັນການ.

ການຍຶດ ຕ້ອງດຳເນີນໂດຍຊ່ອງໜ້າເຈົ້າຂອງຊັບສິນ ຫຼື ຜູ້ຕາງໜ້າຄອບຄົວຂອງຜູ້ກ່ຽວ, ອົງການປົກຄອງບ້ານ ຫຼື ພາກສ່ວນທີ່ກ່ຽວຂ້ອງ ແລະ ພະຍານ ຢ່າງໜ້ອຍ ສອງຄົນ ຂຶ້ນໄປ.

ການອາຍັດ ໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນທີ່ກ່ຽວຂ້ອງ ແຈ້ງຄຳສັ່ງອາຍັດໃຫ້ ເຈົ້າຂອງຊັບສິນ ຫຼື ຜູ້ຕາງໜ້າຄອບຄົວຂອງຜູ້ກ່ຽວ, ອົງການປົກຄອງບ້ານ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ.

ການຍຶດ ຫຼື ອາຍັດຊັບສິນທຸກຄັ້ງ ຕ້ອງເຮັດບົດບັກທຶກ ໂດຍກຳນົດແຈ້ງ ກ່ຽວກັບວັນ, ເວລາ, ສະຖານທີ່, ຊື່ ແລະ ນາມສະກຸນຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ລາຍການຊັບສິນທີ່ຖືກຍຶດ ຫຼື ອາຍັດ ແລະ ຂໍ້ຄວາມອື່ນທີ່ຈຳເປັນ. ເມື່ອເຮັດບົດບັນທຶກແລ້ວ ຕ້ອງອ່ານໃຫ້ຜູ້ເຂົ້າຮ່ວມຟັງ ແລ້ວໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງເທົ່ານັ້ນລົງລາຍເຊັນ ແລະ ແປະໂປ້ມືໄວ້ ຍົກເວັ້ນບັນຊີເງິນຝາກຢູ່ທະນາຄານ ຫຼື ກົດໝາຍກຳນົດໄວ້ເປັນຢ່າງອື່ນ.

ໃນກໍລະນີອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ ອອກຄຳສັ່ງຍຶດ ຫຼື ອາຍັດຊັບສິນໃໝ່ ທີ່ບໍ່ຢູ່ໃນສຳນວນຄະດີ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຍຶດ ຫຼື ອາຍັດ ຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງ ແລະ ດຳເນີນການຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້.

### ມາດຕາ 12 ການປົກປັກຮັກສາຊັບສິນທີ່ຖືກຍຶດ

ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ຕ້ອງປົກປັກຮັກສາຊັບສິນທີ່ຖືກຍຶດນັ້ນ ໄວ້ຢູ່ສາງ ຫຼື ສະຖານທີ່ ທີ່ເໝາະສົມ ເພື່ອບໍ່ໃຫ້ຕົກເຮ່ຍ, ເສຍຫາຍ ຫຼື ເປ່ເພ. ໃນກໍລະນີຊັບສິນນັ້ນ ຫາກຕົກເຮ່ຍ, ເສຍຫາຍ, ຖືກສັບປ່ຽນ ຫຼື ເປ່ເພ ຍ້ອນການລະເມີດກົດໝາຍ, ລະບຽບການ ຫຼື ຂາດຄວາມຮັບຜິດຊອບ ໃນການປົກປັກຮັກສາ ອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນທີ່ກ່ຽວຂ້ອງ ຫຼື ຜູ້ປົກປັກຮັກສານັ້ນ ຕ້ອງຮັບຜິດ ຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ແລະ ມີຄວາມຮັບຜິດຊອບ ຕາມກົດໝາຍ.

ສຳລັບຊັບສິນທີ່ຫຍຸ້ງຍາກໃນການປົກປັກຮັກສາ ໃຫ້ອົງການສືບສວນ-ສອບສວນ ປະສານສົມທົບກັບຂະແໜງການການເງິນ, ຂະແໜງການທີ່ກ່ຽວຂ້ອງ ເພື່ອຊອກຫາວິທີ ແລະ ສະຖານທີ່ ໃນການປົກປັກຮັກສາ ແລະ ຄຸ້ມຄອງ. ສ່ວນເງິນ, ຄຳ, ເພັດ ຫຼື ວັດຖຸມີຄ່າອື່ນ ໃຫ້ນຳໄປຝາກໄວ້ຢູ່ທະນາຄານທຸລະກິດໃດໜຶ່ງ.

### ມາດຕາ 13 ການປົກປັກຮັກສາຊັບສິນທີ່ຖືກອາຍັດ

ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ, ປົກປັກຮັກສາຊັບສິນທີ່ຖືກອາຍັດ ຫຼື ມອບໃຫ້ເຈົ້າຂອງຊັບສິນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເປັນຜູ້ປົກປັກຮັກສາ ໂດຍເຮັດບົດບັນທຶກກ່ຽວກັບການປົກປັກຮັກສາຊັບສິນ ເພື່ອບໍ່ໃຫ້ຊັບສິນດັ່ງກ່າວ ຕົກເຮ່ຍ, ເສຍຫາຍ ຫຼື ເປ່ເພ.

ໃນກໍລະນີຊັບສິນນັ້ນ ຫາກຕົກເຮ່ຍ, ເສຍຫາຍ, ຖືກສັບປ່ຽນ ຫຼື ເປ່ເພ ຍ້ອນການລະເມີດກົດໝາຍ, ລະບຽບການ ຫຼື ຂາດຄວາມຮັບຜິດຊອບໃນການປົກປັກຮັກສາ ອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນທີ່ຮັບຜິດຊອບ ຫຼື ເຈົ້າຂອງຊັບສິນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນຜູ້ປົກປັກຮັກສານັ້ນ ຕ້ອງມີຄວາມຮັບຜິດຊອບ ຕາມກົດໝາຍ ຕາມແຕ່ລະກໍລະນີ.

### ມາດຕາ 14 ການຂາຍຊັບສິນເສື່ອມຄຸນນະພາບໄວ

ໃນກໍລະນີຊັບສິນທີ່ຖືກຍຶດ ຫຼື ອາຍັດນັ້ນ ຫາກເປັນຊັບສິນເສື່ອມຄຸນນະພາບໄວ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ພິຈາລະນາອອກຄຳສັ່ງຂາຍຊັບສິນເສື່ອມຄຸນນະພາບໄວດັ່ງກ່າວ ແລ້ວປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະຮັບຜິດຊອບ ເພື່ອປະເມີນລາຄາ ແລະ ປະມູນຂາຍຊັບສິນ ຕາມລະບຽບການ.

ລາຍຮັບທີ່ໄດ້ຈາກການຂາຍຊັບສິນນັ້ນ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ເກັບຮັກສາໄວ້ຢູ່ທະນາຄານທຸລະກິດ ຫຼື ຄັງເງິນແຫ່ງຊາດ ເພື່ອລໍຖ້າການດຳເນີນຄະດີສິ້ນສຸດ ຫຼື ມີຄຳຕັດສິນຂອງສານ.

### ມາດຕາ 15 ການຂາຍຊັບສິນທີ່ຫຍຸ້ງຍາກໃນການປົກປັກຮັກສາ

ໃນກໍລະນີຊັບສິນທີ່ຖືກຍຶດ ຫຼື ອາຍັດນັ້ນ ຫາກເປັນຊັບສິນທີ່ຫຍຸ້ງຍາກໃນການປົກປັກຮັກສາ ຊຶ່ງໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງແລ້ວ, ແຕ່ຍັງບໍ່ມີຄົນ ຫຼື ສະຖານທີ່ໃນການປົກປັກຮັກສາ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ສະເໜີອົງການໄອຍະການປະຊາຊົນ ພິຈາລະນາອອກຄຳສັ່ງຂາຍຊັບສິນດັ່ງກ່າວ.

ພາຍຫຼັງໄດ້ມີຄຳສັ່ງໃຫ້ຂາຍຊັບສິນ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະຮັບຜິດຊອບ ເພື່ອປະເມີນລາຄາ ແລະ ປະມູນຂາຍຊັບສິນ ຕາມລະບຽບການ.

ລາຍຮັບທີ່ໄດ້ຈາກການຂາຍຊັບສິນນັ້ນ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ເກັບຮັກສາໄວ້ຢູ່ທະນາຄານທຸລະກິດ ຫຼື ຄັງເງິນແຫ່ງຊາດ ເພື່ອລໍຖ້າການດຳເນີນຄະດີສິ້ນສຸດ ຫຼື ມີຄຳຕັດສິນຂອງສານ.

### ມາດຕາ 16 ການສັງລວມລາຍການຊັບສິນ

ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ຕ້ອງສັງລວມລາຍການຊັບສິນ ທີ່ໄດ້ຍຶດ ຫຼື ອາຍັດນັ້ນ ລວມທັງຊັບສິນທີ່ໄດ້ປະມູນຂາຍຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ແລະ 15 ຂອງດຳລັດສະບັບນີ້ ແລ້ວສົ່ງໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ເພື່ອຕິດຕາມລາຍການຊັບສິນດັ່ງກ່າວ ພາຍໃນກຳນົດເວລາ ເຈັດວັນ ນັບແຕ່ວັນໄດ້ສົ່ງສຳນວນຄະດີ ໃຫ້ອົງການໄອຍະການປະຊາຊົນ ເປັນຕົ້ນໄປ.

ໃນກໍລະນີອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ ໄດ້ອອກຄຳສັ່ງຍຶດຊັບສິນເພີ່ມໃໝ່ ຫຼື ມີຄຳແນະນຳສົ່ງຊັບສິນຄືນ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ເປັນຜູ້ປະຕິບັດ ແລະ ລາຍງານລາຍການຊັບສິນຄືນໃໝ່ ໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳສັ່ງ ຫຼື ຄຳແນະນຳ ເປັນຕົ້ນໄປ. ສຳລັບການອາຍັດຊັບສິນເພີ່ມໃໝ່ ຂອງອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ ໃຫ້ສະໜອງຂໍ້ມູນແກ່ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ.

### ມາດຕາ 17 ການຂຶ້ນບັນຊີຕິດຕາມ

ພາຍຫຼັງຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ໄດ້ຮັບບັນຊີຊັບສິນທີ່ຖືກຍຶດ ຫຼື ອາຍັດແລ້ວ ໃຫ້ຂຶ້ນບັນຊີຕິດຕາມ ແລະ ເອົາຂໍ້ມູນດັ່ງກ່າວ ເຂົ້າໃນລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ເພື່ອຕິດຕາມການຄຸ້ມຄອງ, ປົກປັກຮັກສາຊັບສິນ ແລະ ຜົນການດຳເນີນຄະດີ.

## ໝວດທີ 4
## ຊັບສິນທີ່ສານຕັດສິນຮິບເປັນຂອງລັດ

### ມາດຕາ 18 ການສົ່ງບັນຊີຊັບສິນຕາມຄຳຕັດສິນຂອງສານ

ພາຍຫຼັງອົງການປະຕິບັດຄຳຕັດສິນຂອງສານ ໄດ້ຮັບຄຳຕັດສິນ ໃຫ້ຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ຫຼື ໃຫ້ສົ່ງຄືນເຈົ້າຂອງແລ້ວ ໃຫ້ສະຫຼຸບ, ສັງລວມບັນຊີຊັບສິນ ແລ້ວສົ່ງບັນຊີຊັບສິນດັ່ງກ່າວ ພ້ອມດ້ວຍຄຳຕັດສິນ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຕັດສິນ ເປັນຕົ້ນໄປ.

ພ້ອມກັນນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ສົ່ງໜັງສືສະເໜີ ພ້ອມດ້ວຍຄຳຕັດສິນ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ເພື່ອມອບຊັບສິນທີ່ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ. ສຳລັບຊັບສິນທີ່ສານຕັດສິນໃຫ້ສົ່ງຄືນເຈົ້າຂອງນັ້ນ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ຫຼື ຜູ້ຄຸ້ມຄອງຊັບ ມອບຊັບສິນດັ່ງກ່າວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ເພື່ອສົ່ງຄືນໃຫ້ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ.

### ມາດຕາ 19 ການກວດກາຊັບສິນທີ່ສານຕັດສິນຮິບຂອງລັດ

ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງປະສານສົມທົບກັບຂະແໜງການຄຸ້ມຄອງຊັບສິນແຫ່ງລັດ, ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຮ່ວມກັນກວດກາຊັບສິນຕົວຈິງ

ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ສິ່ງບັນຊີຊັບສິນ ເປັນຕົ້ນໄປ ແລະ ໃຫ້ເຮັດບົດບັນທຶກການກວດກາ ໂດຍມີການເຊັນຢັ້ງຢືນຂອງພາກສ່ວນທີ່ກ່ຽວຂ້ອງ ທີ່ເຂົ້າຮ່ວມກວດກາ.

ໃນກໍລະນີຈຳເປັນ ຕ້ອງໄດ້ລົງກວດກາຂໍ້ມູນລະອຽດຕື່ມ ກໍໃຫ້ອົງການປະຕິບັດຄຳຕັດສິນຂອງສານ, ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ປຶກສາຫາລື ແລະ ຕົກລົງກຳນົດ ວັນ, ເວລາ, ສະຖານທີ່ ແລະ ຮູບແບບການກວດກາ ຄັ້ງຕໍ່ໄປ.

ໃນກໍລະນີກວດກາ ບໍ່ພົບ ຫຼື ບໍ່ຄົບ ຕາມຈຳນວນຊັບສິນ ທີ່ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ໃຫ້ຄະນະລົງກວດກາຊັບສິນ ສະຫຼຸບ ແລະ ລາຍງານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ເພື່ອປະສານສົມທົບຄືນກັບພາກສ່ວນທີ່ກ່ຽວຂ້ອງ ກວດກາ, ທວງເອົາຊັບສິນຄືນ ຫຼື ແກ້ໄຂ ຕາມແຕ່ລະກໍລະນີ.

### ມາດຕາ 20 ການມອບຮັບຊັບສິນທີ່ຮິບເປັນຂອງລັດ

ຊັບສິນທີ່ໄດ້ກວດກາ ເຫັນວ່າມີຈິງ ແລະ ຖືກຕ້ອງ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ຫຼື ຜູ້ປົກປັກຮັກສາຊັບສິນດັ່ງກ່າວ ມອບໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ໂດຍຊ້ອງໜ້າພະນັກງານປະຕິບັດຄຳຕັດສິນຂອງສານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 5
## ການຄຸ້ມຄອງ ແລະ ນຳໃຊ້ຊັບສິນທີ່ຮິບເປັນຂອງລັດ

### ມາດຕາ 21 ການຄຸ້ມຄອງຊັບສິນທີ່ຮິບເປັນຂອງລັດ

ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ເປັນຜູ້ຄຸ້ມຄອງ ຊັບສິນທີ່ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງຢ່າງລວມສູນ ດ້ວຍການຂຶ້ນບັນຊີ, ຂຶ້ນທະບຽນເປັນຊັບສິນຂອງລັດ ແລະ ຄົ້ນຄວ້າ ກ່ຽວກັບການແບ່ງປັນການນຳໃຊ້, ຂາຍຊັບສິນຂອງລັດ ເພື່ອສະເໜີຂັ້ນເທິງ ພິຈາລະນາ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 22 ການນຳໃຊ້ຊັບສິນຂອງລັດ

ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ເປັນຜູ້ຄົ້ນຄວ້າ ການສະເໜີຂໍນຳໃຊ້, ເງື່ອນໄຂ ແລະ ຄວາມຈຳເປັນ ເພື່ອສະເໜີຂັ້ນເທິງ ພິຈາລະນາ ແບ່ງປັນນຳໃຊ້ຊັບສິນຂອງລັດ ຕາມກົດໝາຍ.

ການນຳໃຊ້ຊັບສິນຂອງລັດ ຕ້ອງຮັບປະກັນໃຫ້ຖືກຕ້ອງ ຕາມຈຸດປະສົງ, ເປົ້າໝາຍຂອງແຕ່ລະປະເພດຊັບສິນ, ນຳໃຊ້ເຂົ້າໃນວຽກງານລວມຂອງລັດ, ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

### ມາດຕາ 23 ລາຍຮັບຈາກການຮິບຊັບສິນເປັນຂອງລັດ

ລາຍຮັບຈາກການຮິບຊັບສິນເປັນຂອງລັດ ມີ ດັ່ງນີ້:

1. ເປັນເງິນ;
2. ເງິນຈາກການຂາຍຊັບສິນ;
3. ເງິນຄ່າເຊົ່າຊັບສິນທີ່ຖືກຮິບ;
4. ລາຍຮັບອື່ນ.

ລາຍຮັບຈາກການຮິບຊັບສິນເປັນຂອງລັດ ໃຫ້ມອບເຂົ້າເປັນງົບປະມານແຫ່ງລັດທັງໝົດ ເວັ້ນເສຍແຕ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໄດ້ກຳນົດໄວ້ເປັນຢ່າງອື່ນ.

**ມາດຕາ 24 ຂໍ້ມູນກ່ຽວກັບຊັບສິນຂອງລັດ**

ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ເປັນຜູ້ປ້ອນຂໍ້ມູນ ກ່ຽວກັບຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ເຂົ້າໃນລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນແຫ່ງລັດ ເພື່ອສະດວກໃນການຄຸ້ມຄອງ, ຕິດຕາມ ກວດກາຊັບສິນດັ່ງກ່າວ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 25 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຊື້ ຂາຍ, ມອບ ໂອນ, ເຄື່ອນຍ້າຍ ຫຼື ລັກລອບເອົາ ຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
2. ຄອບຄອງ, ນຳໃຊ້ ຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຮ່ວມກັນ ປົກປິດ, ຊຸກເຊື່ອງ ຫຼື ທຳລາຍ ຂໍ້ມູນ ກ່ຽວກັບຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ;
4. ໃຫ້ສິນບົນ, ຄ່າຈ້າງ, ລາງວັນ ແລະ ສົມຮູ້ຮ່ວມຄິດ ໃນການເອົາຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ມາເປັນຂອງຕົນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 26 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານລັດທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານລັດທີ່ກ່ຽວຂ້ອງ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ ແລະ ຂໍ້ມູນ ກ່ຽວກັບຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຄອບຄອງ ແລະ ນຳໃຊ້ຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ທວງເອົາ, ຂໍເອົາ ຫຼື ຮັບສິນບົນ ເພື່ອຜົນປະໂຫຍດຂອງຕົນ, ຄອບຄົວ, ຍາດພີ່ນ້ອງ ຫຼື ໝູ່ຄະນະ;
4. ປະລະໜ້າທີ່ ແລະ ຂາດຄວາມຮັບຜິດຊອບ ຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;
5. ກຳນົດບໍລິມາດ, ຕີລາຄາປະມູນຂາຍ ຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
6. ນຳເອົາເງິນຈາກການຂາຍ ຫຼື ລາຍຮັບຈາກຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໄປນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດ;
7. ປົດບັງ, ຊຸກເຊື່ອງ ຫຼື ສັບປ່ຽນທາງດ້ານປະລິມານ ຫຼື ຄຸນນະພາບຂອງຊັບສິນທີ່ຍຶດ, ອາຍັດ ແລະ ຮິບເປັນຂອງລັດ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ
## ວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ

**ມາດຕາ 27 ອົງການຄຸ້ມຄອງ ແລະ ກວດກາ**

ອົງການຄຸ້ມຄອງ ແລະ ກວດກາວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ປະກອບດ້ວຍ:

1. ກະຊວງການປ້ອງກັນຄວາມສະຫງົບ;
2. ກະຊວງການປ້ອງກັນຊາດ;
3. ກະຊວງການກະສິກຳ ແລະ ປ່າໄມ້;
4. ອົງການຕ້ານການສໍ້ລາດບັງຫຼວງ;
5. ກະຊວງການຍຸຕິທຳ;
6. ກະຊວງການການເງິນ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງກະຊວງການ ປ້ອງກັນປະເທດຄວາມສະຫງົບ**

ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ກະຊວງການປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຊັບສິນທີ່ຖືກຍຶດ ຫຼື ອາຍັດ ເພື່ອສະເໜີຂັ້ນເທິງ ພິຈາລະນາ;
2. ຄົ້ນຄວ້າອອກລະບຽບການ ກ່ຽວກັບວຽກງານຊັບສິນທີ່ຖືກຍຶດ ຫຼື ອາຍັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຊັບສິນທີ່ຖືກຍຶດ ຫຼື ອາຍັດ ໃຫ້ສັງຄົມ ຢ່າງກວ້າງ ແລະ ທົ່ວເຖິງ;
4. ຄົ້ນຄວ້າຂຶ້ນແຜນງົບປະມານ ເພື່ອຮັບໃຊ້ເຂົ້າໃນວຽກງານຂອງອົງການສືບສວນ-ສອບສວນ ກ່ຽວກັບຊັບສິນທີ່ຖືກຍຶດ ຫຼື ອາຍັດ;
5. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ກວດກາການຍຶດ ຫຼື ອາຍັດ;
6. ສັງລວມ ແລະ ຂຶ້ນບັນຊີຊັບສິນທີ່ຖືກຍຶດ ຫຼື ອາຍັດ;
7. ຄົ້ນຄວ້າສ້າງ ສາງ, ສິ່ງອຳນວຍຄວາມສະດວກ ໃນການປົກປັກຮັກສາ ຊັບສິນທີ່ຖືກຍຶດ ຫຼື ອາຍັດ;
8. ລາຍງານບັນຊີຊັບສິນ ໃຫ້ກະຊວງການຄຸ້ມຄອງຊັບສິນແຫ່ງລັດ;
9. ປະສານສົມທົບກັບກະຊວງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ;
10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ ຫຼື ອາຍັດ ໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 29 ສິດ ແລະ ໜ້າທີ່ຂອງກະຊວງການປ້ອງກັນຊາດ**

ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ກະຊວງການປ້ອງກັນຊາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການກະທຳຜິດທາງທະຫານ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ຄົ້ນຄວ້າອອກລະບຽບການ ກ່ຽວກັບວຽກງານຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການກະທຳຜິດທາງທະຫານ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການກະທຳຜິດທາງທະຫານ ໃຫ້ສັງຄົມ ຢ່າງກວ້າງ ແລະ ທົ່ວເຖິງ;

4. ຄົ້ນຄວ້າຂຶ້ນແຜນງົບປະມານ ເພື່ອຮັບໃຊ້ເຂົ້າໃນວຽກງານຂອງອົງການສືບສວນ-ສອບສວນ ກ່ຽວກັບຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການກະທຳຜິດທາງທະຫານ;

5. ສັງລວມ ແລະ ຂຶ້ນບັນຊີຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການກະທຳຜິດທາງທະຫານ;

6. ລາຍງານບັນຊີຊັບສິນ ທີ່ພົວພັນກັບການກະທຳຜິດທາງທະຫານ ໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ;

7. ປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການກະທຳຜິດທາງທະຫານ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການກະທຳຜິດທາງທະຫານ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງຂະແໜງການກະສິກຳ ແລະ ປ່າໄມ້**

ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ຂະແໜງການກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບຄະດີປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ຄົ້ນຄວ້າອອກລະບຽບການ ກ່ຽວກັບວຽກງານຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບຄະດີປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຊັບສິນ ທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບຄະດີປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ ໃຫ້ສັງຄົມ ຢ່າງກວ້າງ ແລະ ທົ່ວເຖິງ;

4. ຄົ້ນຄວ້າຂຶ້ນແຜນງົບປະມານ ເພື່ອຮັບໃຊ້ເຂົ້າໃນວຽກງານຂອງອົງການສືບສວນ-ສອບສວນ ກ່ຽວກັບຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບຄະດີປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ;

5. ສັງລວມ ແລະ ຂຶ້ນບັນຊີຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບຄະດີປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ;

6. ລາຍງານບັນຊີຊັບສິນ ທີ່ພົວພັນກັບຄະດີປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ ໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ;

7. ປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ຊຶ່ງພົວພັນກັບຄະດີປ່າໄມ້, ທີ່ດິນປ່າໄມ້, ສັດ ນ້ຳ ແລະ ສັດປ່າ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບຄະດີປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງອົງການຕ້ານການສໍ້ລາດບັງຫຼວງ**

ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ອົງການຕ້ານການສໍ້ລາດບັງຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຊັບສິນ ທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການຕ້ານສໍ້ລາດບັງຫຼວງ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ຄົ້ນຄວ້າອອກລະບຽບການ ກ່ຽວກັບວຽກງານຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການສໍ້ລາດບັງຫຼວງ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການຕ້ານສໍ້ລາດບັງຫຼວງ ໃຫ້ສັງຄົມ ຢ່າງກວ້າງ ແລະ ທົ່ວເຖິງ;

4. ຄົ້ນຄວ້າຂຶ້ນແຜນງົບປະມານ ເພື່ອຮັບໃຊ້ເຂົ້າໃນວຽກງານຂອງອົງການສືບສວນ-ສອບສວນ ກ່ຽວກັບຊັບສິນ ຊຶ່ງພົວພັນກັບຄະດີການສໍ້ລາດບັງຫຼວງ ທີ່ຖືກຍຶດ ຫຼື ອາຍັດ;

5. ສັງລວມ ແລະ ຂຶ້ນບັນຊີຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບຄະດີການສໍ້ລາດບັງຫຼວງ;

6. ລາຍງານບັນຊີຊັບສິນ ທີ່ພົວພັນກັບຄະດີການສໍ້ລາດບັງຫຼວງ ໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ;

7. ປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ຊຶ່ງພົວພັນກັບການຕ້ານສໍ້ລາດບັງຫຼວງ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ ຫຼື ອາຍັດ ຊຶ່ງພົວພັນກັບການຕ້ານສໍ້ລາດບັງຫຼວງ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 32 ສິດ ແລະ ໜ້າທີ່ຂອງຂະແໜງການຍຸຕິທຳ**

ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ຂະແໜງການຍຸຕິທຳ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບຊັບສິນທີ່ຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໃຫ້ສັງຄົມ ຢ່າງກວ້າງ ແລະ ທົ່ວເຖິງ;

3. ຄົ້ນຄວ້າຂຶ້ນແຜນງົບປະມານ ເພື່ອຮັບໃຊ້ເຂົ້າໃນວຽກງານຂອງອົງການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຊັບສິນທີ່ຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ;

4. ສັງລວມບັນຊີຊັບສິນທີ່ຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ຕາມຄຳຕັດສິນຂອງສານ ແລ້ວສົ່ງໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາຊັບສິນທີ່ສານຕັດສິນຮິບເປັນຂອງລັດ ຕາມບັນຊີຊັບສິນ;

6. ສົ່ງສຳເນົາຄຳຕັດສິນຂອງສານ ແລະ ສະໜອງຂໍ້ມູນອື່ນ ໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ;

7. ມອບຊັບສິນທີ່ສານຕັດສິນໃຫ້ສົ່ງຄືນ ໃຫ້ແກ່ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ;

8. ທວງເອົາຊັບສິນທີ່ຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ທີ່ຍັງບໍ່ທັນໄດ້ຮັບຈາກອົງການສືບສວນ-ສອບສວນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມບັນຊີຊັບສິນ ເພື່ອມອບໃຫ້ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ;

9. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 33 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການເຄື່ອນໄຫວວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ ການຄຸ້ມຄອງ ແລະ ຕິດຕາມ ກວດກາຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໃນຂອບເຂດທົ່ວປະເທດ;

2. ຄຸ້ມຄອງ ແລະ ຕິດຕາມ ກວດກາການເຄື່ອນໄຫວວຽກງານ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ພາສີ, ອາກອນ, ຊັບສິນ;

3. ຄົ້ນຄວ້າ, ພິຈາລະນາ ການສະເໜີຂໍງົບປະມານ ຂອງກະຊວງການທີ່ກ່ຽວຂ້ອງ ເພື່ອນຳໃຊ້ເຂົ້າໃນວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 2 ມາດຕາ 38 ຂອງດຳລັດສະບັບນີ້;

4. ຂຶ້ນບັນຊີຕິດຕາມຊັບສິນທີ່ຖືກຍຶດ ຫຼື ອາຍັດ;

5. ເຂົ້າຮ່ວມໃນການຕີລາຄາປະມູນຂາຍຊັບສິນທີ່ຖືກຍຶດ ຫຼື ອາຍັດ;

6. ຂຶ້ນບັນຊີ ແລະ ຂຶ້ນທະບຽນ ຊັບສິນທີ່ສານຕັດສິນຮິບເປັນຂອງລັດ ເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ;

7. ເປັນເຈົ້າການໃນການຈັດຕັ້ງປະຕິບັດ ການປະມູນຂາຍຊັບສິນທີ່ຮິບເປັນຂອງລັດ;

8. ຄຸ້ມຄອງ, ເກັບຮັກສາ ແລະ ແບ່ງປັນລາຍຮັບຈາກຊັບສິນທີ່ຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ;

9. ພິຈາລະນາການແບ່ງປັນນຳໃຊ້ ຊັບສິນທີ່ຖືກຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

10. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຕິດຕາມກວດກາຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ;

11. ສະຫຼຸບ ແລະ ລາຍງານ ກ່ຽວກັບຊັບສິນທີ່ຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 34 ກະຊວງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ຊຸກຍູ້, ຕິດຕາມ ກວດກາ, ໃຫ້ການຮ່ວມມື ແລະ ປະສານສົມທົບກັບອົງການຄຸ້ມຄອງ ແລະ ກວດກາວຽກງານວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 35 ເນື້ອໃນການກວດກາ**

ການກວດກາວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ມີ ເນື້ອໃນ ດັ່ງນີ້

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບມາເປັນຂອງລັດ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງ ແລະ ກວດກາວຽກງານການຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ;

3. ການຄຸ້ມຄອງ, ການປົກປັກຮັກສາ ແລະ ການນຳໃຊ້ຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ;

4. ຄວາມຮັບຜິດຊອບ ແລະ ການປະພຶດຂອງເຈົ້າໜ້າທີ່ ແລະ ພະນັກງານຂອງລັດທີ່ກ່ຽວຂ້ອງ.

**ມາດຕາ 36 ຮູບການການກວດກາ**

ການກວດກາວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາວຽກງານຊັບສິນທີ່ຍຶດ, ອາຍັດ ແລະ ຮິບເປັນຂອງລັດ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 37 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 38 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 39 ງົບປະມານນຳໃຊ້**

ງົບປະມານ ທີ່ນຳໃຊ້ເຂົ້າໃນວຽກງານຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ໃຫ້ນຳໃຊ້ງົບປະມານຂອງຂະແໜງການທີ່ກ່ຽວຂ້ອງ ໂດຍການຂຶ້ນແຜນງົບປະມານ ຕາມຮ່າງສາລະບານງົບປະມານຂອງແຕ່ລະຂະແໜງການ.

ສຳລັບງົບປະມານນຳໃຊ້ ໃນການຄຸ້ມຄອງ, ປົກປັກຮັກສາ, ການກວດກາ ຊັບສິນທີ່ຖືກຍຶດ, ອາຍັດ, ການທວງເອົາ ແລະ ການມອບຮັບຊັບສິນທີ່ຮິບເປັນຂອງລັດ ທີ່ບໍ່ນອນໃນບັນຊີສາລະບານງົບປະມານຂອງຂະແໜງການທີ່ກ່ຽວຂ້ອງ ສາມາດສະເໜີຫາຂະແໜງການການເງິນ ເພື່ອພິຈາລະນາຈັດສັນງົບປະມານ. ສຳລັບລາຍລະອຽດກ່ຽວກັບຂັ້ນຕອນ ແລະ ວິທີການ ໃນການຂໍນຳໃຊ້ງົບປະມານດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 40 ການຈັດຕັ້ງປະຕິບັດ**

ກະຊວງການເງິນ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກະຊວງຍຸຕິທຳ ເປັນເຈົ້າການປະສານສົມທົບກັບບັນດາ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 41 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ໃນວັນທີ 1 ຕຸລາ 2022 ເປັນຕົ້ນໄປ.

ຊັບສິນໃດ ທີ່ສານຕັດສິນຮິບເປັນຂອງລັດ ກ່ອນດຳລັດສະບັບນີ້ ມີຜົນສັກສິດ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ປະສານສົມທົບກັບຂະແໜງການຄຸ້ມຄອງຊັບສິນແຫ່ງລັດ, ອົງການສືບສວນ-ສອບສວນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກວດກາ ແລະ ທວງເອົາຊັບສິນນັ້ນ ມາເປັນຂອງລັດ.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ